ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VILLAGE VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 220/ບຊລ

ນະຄອນຫຼວງວຽງຈັນ, ວັນທີ 29 JUL 2024

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 2 ປີ 2024

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສາມັນສະພາ ບໍລິຫານ ຄັ້ງທີ 02 ປີ 2024 ວັນທີ 29 ກໍລະກົດ 2024 ເວລາ 9:00 ໂມງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະຮັບຮອງກ່ຽວກັບການກູ້ຢືມເງິນຈາກທະນາຄານ.
2. ພິຈາລະນາ ແລະຮັບຮອງ ການດັດແກ້ເນື້ອໃນໃບທະບຽນວິສາຫະກິດ ຂອງ ບໍລິສັດ ກໍ່ສ້າງ ພັດທະນາຕົວເມືອງ ລາວ ຈຳກັດຜູ້ດຽວ
3. ພິຈາລະນາ ແລະຮັບຮອງ ກ່ຽວກັບການດັດແກ້ເນື້ອໃນໃບທະບຽນວິສາຫະກິດ ຂອງ ບໍລິສັດ ສະໝຸນໄພຈີ່ງເຄີ (ລາວ) ຈຳກັດຜູ້ດຽວ
4. ພິຈາລະນາ ແລະຮັບຮອງ ກ່ຽວກັບການສະເໜີຍກລະດັບຂອງໂຄງການກໍ່ສ້າງເຂດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ
5. ພິຈາລະນາ ແລະຮັບຮອງກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດວຽກງານການສະສາງຊັບສົມບັດຂອງໂຮງງານຊີມັງ ວັງວຽງ ຫຼັງທີ 02 ແລະ ການເບີກຈ່າຍເງິນອຸດໜູນອອກການ.

6. ພິຈາລະນາແລະຮັບຮອງກ່ຽວກັບການປັບປຸງກຳມະການສະພາບໍລິຫານຝ່າຍລາວ ທີ່ເປັນກຳມະການອິດສະຫຼະ

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ຊີມັງລາວ ມະຫາຊົນ

ປະທານສະພາບໍລິຫານ



ເມ້ຍເຫຼີຍ